# ສູນສຶກສາການພັດທະນາຕາມພຣະຣາຊດຳຣິພູພານ

## ຈຸດປະສົງ

**ຫົວຂໍ້ຂອງການເຝິກອົບຮົມ ETP:**

- ການພັດທະນາແບບຍືນຍົງ ແລະ ຈິດສຳນຶກຕໍ່ສິ່ງແວດລ້ອມ
- ແນວຄວາມຄິດ ແລະ ຜົນປະໂຫຍດຂອງການຄຸ້ມຄອງຊັບພະຍາກອນແລະ ສິ່ງແວດລ້ອມແບບປະສົມປະສານ (IREM)
- ອຸປະສັກຂອງ IREM
- ເຄື່ອງມືສຳຫຼັບການຈັດຕັ້ງປະຕິບັດ IREM
- ການພັດທະນາ IREM ທີ່ມີປະສິດທິຜົນ ໃນອ່າງແມ່ນ້ຳຂອງ

ການສຶກສາຕາມກໍຣະນີ ໃນຄັ້ງນີ້ຈະສຶກສາກ່ຽວກັບການຄຸ້ມຄອງສິ່ງແວດລ້ອມຮ່ວມກັນກັບໂຄງການພັດທະນາ ພາຍໃຕ້ການອຸປະຖຳຂອງສູນສຶກສາການພັດທະນາແຫ່ງຣາຊອານາຈັກໄທ (RDSC). ໂດຍສະເພາະ ການສຶກສາຈະໄດ້ສຸມໃສ່ການສາທິດ ການນຳໃຊ້ທິດສະດີກ່ຽວກັບການຄຸ້ມຄອງສິ່ງແວດລ້ອມ ເພື່ອຂານຕອບຕໍ່ສິ່ງທ້າທາຍໃນການພັດທະນາຊົນນະບົດ ໃນປະເທດໄທ ໂດຍການນຳໃຊ້ສູນພູພານເປັນຕົວຢ່າງ. ການສຶກສານີ້ຈະເນັ້ນໜັກໃສ່ຄຸນລັກສະນະສະເພາະຂອງຕົວແບບການພັດທະນາຂອງ RDSC ທີ່ຖືກນຳມາໃຊ້ໃນປະເທດໄທໃນປະຈຸບັນ ແລະ ເນັ້ນໃສ່ ບັນດາໂອກາດແລະ ເງື່ອນໄຂທີ່ຈຳເປັນ ສຳຫຼັບໂຄງການອື່ນໆທີ່ຄ້າຍຄືກັນ ທີ່ຈະຖືກຈັດຕັ້ງປະຕິບັດຢູ່ໃນປະເທດອື່ນໆໃນອ່າງແມ່ນ້ຳຂອງ.

## ປະເດັນ

ປະເດັນສະເພາະທີ່ເນັ້ນໃຫ້ເຫັນໃນການສຶກສາໃນຄັ້ງນີ້ມີຄື:

1. ທ່າແຮງໃນການນຳໃຊ້ທິດສະດີການຄຸ້ມຄອງສິ່ງແວດລ້ອມທີ່ມີຢູ່ໃນປະຈຸບັນ ເຂົ້າໃນສ້າງສ້າງແບບແຜນການພັດທະນາທີ່ມີຄວາມຍືນຍົງໃນຊຸມຊົນເຂດຊົນນະບົດ
2. ອຸປະສັກສຳຫຼັບການພັດທະນາແບບຍືນຍົງ ເຊັ່ນ: ອຸປະສັກທາງດ້ານສະຖາບັນ ແລະຊ່ອງຫວ່າງຂອງຄວາມຮູ້
3. ຄວາມສຳຄັນຂອງການເຂົ້າຮ່ວມ ແລະ ການມີພັນທະຂອງລັດຖະບານແລະປະຊາຊົນທ້ອງຖິ່ນ ເຂົ້າໃນການສ້າງແນວຄວາມຄິດ ແລະການຈັດຕັ້ງປະຕິບັດໂຄງການ
4. ປັດໃຈຊຸກຍູ້ສຳຫຼັບແບບແຜນການພັດທະນາແບບຍືນຍົງຂະໜາດໃຫຍ່ (ເຊັ່ນ: ການປະຕິຮູບກົດໝາຍແລະລະບຽບການ, ຄວາມກົດດັນຈາກຜູ້ໃຫ້ທຶນ, ຜູ້ນຳທ້ອງຖິ່ນເປັນຕົວແທນໃຫ້ສັງຄົມສຳຫຼັບການຫັນປ່ຽນ)

## ວັດຖຸປະສົງຂອງການຮຽນຮູ້

ພາຍຫຼັງສຳເລັດກໍຣະນີສຶກສານີ້ ຜູ້ເຂົ້າຮ່ວມການເຝິກອົບຮົມຈະສາມາດ:

- ໃຫ້ຕົວຢ່າງຂອງໂຄງການ ຄຸ້ມຄອງສິ່ງແວດລ້ອມ ແລະການພັດທະນາ ທີ່ດຳເນີນການໂດຍ RDSC
- ສົນທະນາກ່ຽວກັບສາຍເຫດວ່າ ເປັນຫຍັງການອຸປະຖຳຈາກກະສັດ ຈຶ່ງກາຍເປັນສ່ວນປະກອບອັນຈຳເປັນ ຕໍ່ການສຳເລັດຜົນ ໃນວຽກງານການພັດທະນາຢູ່ປະເທດໄທ
- ຮັບຮູ້ເຖິງຄວາມສຳຄັນຂອງການສຸມຈິດສຸມໃຈໃສ່ການພັດທະນາແບບຍືນຍົງ ແລະການເຂົ້າຮ່ວມຂອງເຂົາເຈົ້າເຂົ້າໃນວຽກງານດັ່ງກ່າວ
- ໃຈ້ແຍກບັນດາບາດກ້າວທີ່ມີຜົນຕໍ່ການຖ່າຍທອດຄວາມຮູ້ໃຫ້ແກ່ປະຊາຊົນເຂົ້າຮ່ວມໃນໂຄງການ RDSC
- ກຳນົດຜູ້ມີສ່ວນຮ່ວມໃນໂຄງການ RDSC ແລະ ບອກໃຫ້ຮູ້ເຖິງ ບົດບາດແລະຄວາມຮັບຜິດຊອບຂອງເຂົາເຈົ້າ

- ກຳນົດຈຸດດີແລະຂໍ້ຫຍໍ້ທໍ້ຂອງແນວຄວາມຄິດແລະການຈັດຕັ້ງຂອງໂຄງການ RDSC
- ສະເໜີແນະນຳວ່າຂໍ້ດີທາງດ້ານໃດຂອງໂຄງການ RDSC ທີ່ຈະສາມາດນຳເອົາໃຊ້ໃນປະເທດອື່ນໃນອ່າງແມ່ນ້ຳຂອງໄດ້
- ລົມທະນາເຖິງອຸປະສັກຕໍ່ການນຳເອົາວິທີການຂອງໂຄງການ RDSC ໄປໃຊ້ໃນປະເທດຂອງຕົນ.

# ສັງລວມໂຄງການໂດຍຫຍໍ້

## *ບົດແນະນຳ*

ກະສັດແຫ່ງປະເທດຣາຊອານາຈັກໄທ ໄດ້ອຸທິດຕົນຕໍ່ວຽກງານການພັດທະນານັບຕັ້ງແຕ່ກາງຊຸມປີ 1950 ເປັນຕົ້ນມາ ຫຼັງຈາກທີ່ທ່ານໄດ້ຮັບຮູ້ບັນຫາຂອງປະຊາຊົນຊາວຊົນນະບົດ. ໃນເວລາການຢ້ຽມຢາມເຂດຊົນນະບົດ, ທ່ານໄດ້ຮັບຮູ້ໄດ້ເຖິງ ຄວາມຈຳເປັນຂອງການລິເລີ້ມໂຄງການພັດທະນາ ທີ່ເຫັນວ່າມີຜົນປະໂຫຍດ ໂດຍກົງຕໍ່ປະຊາຊົນ ໃນລະດັບຮາກຖານ ແລະ ໃນເວລາດຽວກັນ ເປັນໂຄງຳການທີ່ແທດ ເໝາະກັບສະພາບແລະເງື່ອນໄຂທຳມະຊາດ, ສັງຄົມ ແລະ ສິ່ງແວດລ້ອມຂອງທ້ອງຖິ່ນ. ນອກນັ້ນ ທ່ານຍັງມີຄວາມມຸ່ງມາດປາຖະໜາຢາກຈະປຸກລະດົມໃຫ້ປະ ຊາຊົນທ້ອງຖິ່ນສາມາດ ເປັນທີ່ເພິ່ງ ຂອງຕົນເອງໄດ້. ຕໍ່ສິ່ງດັ່ງກ່າວນີ້, ທ່ານໄດ້ເນັ້ນໃຫ້ ເຫັນເຖິງຄວາມຈຳເປັນຂອງ ການກະຈາຍຄວາມຮູ້ກ່ຽວກັບເຕັກນິກ ທາງດານສາຂາອາຊີບ ແລະ ການກະສິກຳໃຫ້ ແກ່ຊາວບ້ານອີກດ້ວຍ.

ນັບຕັ້ງແຕ່ໄດ້ສ້າງຕັ້ງ RDSC ແຫ່ງທຳອິດໃນປີ 1979 ເປັນຕົ້ນມາ, ໄດ້ມີການສ້າງຕັ້ງສູນທັງໝົດ ຫົກແຫ່ງໃນທົ່ວປະເທດໄທ ອັນກວມເອົາພາກພື້ນໃຫຍ່ໆຂອງປະເທດ. ບັນດາສູນທີ່ຖືກສ້າງຕັ້ງຂຶ້ນມາເຖິງປະຈຸບັນລວມມີ:

- ສູນການສຶກສາການພັດທະນາຕາມພຣະຣາຊດຳຣິ ເຂົາຫີນຊ້ອນ, ເມືອງສາຣະຄາມ, ແຂວງຊະເຊີງເຊົາ
- ສູນການສຶກສາການພັດທະນາຕາມພຣະຣາຊດຳຣິ ກຸງກະແບງໃບ, ເມືອງທ່າໃໝ່, ແຂວງຈັນທະບູຣີ
- ສູນການສຶກສາການພັດທະນາຕາມພຣະຣາຊດຳຣິ ພິກຸນທອງ, ເມືອງ ນະຣາທິວາດ, ແຂວງ ນາຣາທິວາດ
- ສູນການສຶກສາການພັດທະນາຕາມພຣະຣາຊດຳຣິ ພູພານ, ເມືອງສະກົນນະຄອນ, ແຂວງສະກົນນະຄອນ
- ສູນການສຶກສາການພັດທະນາຕາມພຣະຣາຊດຳຣິ ຫ້ວຍຫົງຄຣາຍ, ເມືອງ ດອຍສະເກດ, ແຂວງຊຽງໃໝ່
- ສູນການສຶກສາການພັດທະນາຕາມພຣະຣາຊດຳຣິ ຫ້ວຍສາຍ, ເມືອງສະອຳ, ແຂວງເພັດຊະບູຣີ

## ສູນການສຶກສາການພັດທະນາແຫ່ງພະຣາຊດຳຣິ

*ລັກສະນະພິເສດຂອງກິດຈະກຳການພັດທະນາແຫ່ງພຣະຣາຊດຳຣິ*

ເຖິງວ່າສູນການສຶກສາການພັດທະນາແຫ່ງພະຣາຊດຳຣິແຫ່ງໜຶ່ງໆ ຈະຈຳເນີນຫຼາຍໂຄງການທີ່ມີຄວາມ ແຕກຕ່າງກັນທາງດ້ານຫົວຂໍ້ວິຊາ ແລະຈຸດປະສົງ, ແຕ່ສູນດັ່ງກ່າວນີ້ພັດມີລັກສະນະພິເສດທີ່ຄ້າຍຄຽງກັນ ຄື ມີຄວາມສອດຄ່ອງກັບແນວຄວາມຄິດແລະທິດສະດີກ່ຽວກັບການພັດທະນາຂອງມະຫາກະສັດ. ໂຄງການພຣະຣາຊດຳຣິສ່ວນໃຫຍ່ມີຈຸດປະສົງ ເພື່ອຊ່ວຍເຫຼືອປະຊາຊົນທ້ອງຖິ່ນໃຫ້ມີຊີວິດຳການເປັນຢູ່ທີ່ດີຂຶ້ນ. ໃນເມື່ອການດຳລົງຊີວິດຂອງປະຊາຊົນໄທສ່ວນ ໃຫຍ່ຍັງຂຶ້ນກັບການກະສິກຳຢູ່, ໂຄງການສ່ວນໃຫຍ່ຈະມີຄວາມກ່ຽວພັນກັບການປັບປຸງປັດ ໃຈນຳເຂົ້າຂອງການຜະລິດເຊັ່ນ: ດິນ, ນ້ຳ, ເນື້ອທີ່ກະສິກຳ, ຄວາມຮູ້ດ້ານການກະສິກຳ ແລະການອະນຸລັກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ. ອົງປະກອບຫຼັກຂອງໂຄງການດັ່ງນີ້ແມ່ນການນຳໃຊ້ແນວຄວາມຄິດ ແລະ ເຕັກໂນໂລຊີແບບງ່າຍ ດາຍ ທີ່ສາມາດນຳໄປໃຊ້ໄດ້ໄວ ແລະມີປະສິດທິຜົນສູງ.

ນອກນັ້ນ, ກະສັດໄທ ຍັງໄດ້ຍໍ້າໃຫ້ເຫັນເຖິງຄວາມຈໍາເປັນ ທີ່ໂຄງການທັງໝົດຕ້ອງມີຄວາມສອດຄ່ອງກັບຫຼັກ ການລວມຂອງການພັດທະນາແບບຍືນຍົງ. ໃນນີ້, ໄດ້ຖືເອົາການບັນລຸເຖິງຄວາມເປັນອັນນຶ່ງອັນດຽວກັນ ແລະຊຸກຍູ້ ຊ່ວຍເຫຼືອເຊິ່ງກັນແລະກັນລະຫວ່າງການພັດທະນາ, ການອະນຸລັກຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມເປັນ ບັນຫາສໍາຄັນພື້ນຖານ. ຢາກບັນລຸໄດ້ຕາມສິ່ງທີ່ກ່າວ, ໂຄງການພຣະຣາຊດໍາຣິ ຕ້ອງໄດ້ຊອກຮູ້ແລະເຂົ້າໃຈທາດແທ້ ຂອງ ແລະ ການພົວພັນລະຫວ່າງຄົນ ແລະ ສິ່ງແວດລ້ອມເພື່ອເຮັດໃຫ້ສາມາດກໍານົດໄດ້ວ່າ ຈະຂານຕອບຕໍ່ບັນຫາ ສິ່ງແວດລ້ອມແນວໃດໃຫ້ໄດ້ດີທີ່ສຸດ. ຕົວຢ່າງ, ແນວຄວາມຄິດຂອງເຈົ້າຊີວິດ " ສາມ ປ່າ, ສີ່ຜົນປະໂຫຍດ" ໄດ້ລວມເອົາການປະສານສົມທົບລະຫວ່າງຄວາມຈໍາເປັນໃນການອະນຸລັກ ແລະການຟື້ນຟູຊັບພະຍາກອນປ່າໄມ້ ເຂົ້າຢູ່ໃນຄວາມຈໍາເປັນທາງດ້ານເສດຖະກິດ-ສັງຄົມ. ເພື່ອປ້ອງກັນການທໍາລາຍປ່າໄມ້ຈາກການຫາໄມ້ຟືນຂອງຊາວນາ ໄດ້ສະເໜີໃຫ້ປູກປ່າສາມປະເພດ ເພື່ອຕອບສະໜອງສີ່ຜົນປະໂຫຍດຄື: ປະເພດຫນຶ່ງປູກເພືອສະໜອງໄມ້ເພື່ອການໃຊ້ສອຍໃນຄອບຄົວ, ອີກປະເພດຫນຶ່ງເພື່ອສະໜອງໝາກໄມ້, ແລະ ອີກປະເພດຫນຶ່ງເພື່ອສະໜອງພະລັງງານເຊື້ອໄຟ ແລ້ວ ປ່າທຸກປະເພດຈະສະໜອງຜົນປະໂຫຍດອັນທີສີ່ ຄືສ້າງຄວາມເຂັ້ມແຂງແກ່ການອະນຸລັກດິນແລະນໍ້າ.

ນອກຈາກນີ້ ເພື່ອພັດທະນາອາຊີບເພື່ອຍົກລາຍໄດ້ໃຫ້ແກ່ຄອບຄົວໃນເຂດຊົນນະບົດ, ໂຄງການພຣະຣາຊດໍາຣິ ທຸກໂຄງການໄດ້ລວມເອົາອົງປະກອບຂອງໂຄງການທີ່ກ່ຽວພັນກັບການພັດທະນາສັງຄົມ ແລະ ການປັບປຸງຄຸນະພາບຊີວິດຂອງປະຊາຊົນເຂົ້າຢູ່ນໍາ. ແນວຄວາມຄິດອັນນີ້ໄດ້ອີງໃສ່ຫຼັກການລວມ ທີ່ວ່າ: ສະມາຊິກຂອງສັງຄົມຄວນ ເຂົ້າຮ່ວມເປັນ " ການກະຈາຍຈາກຂ້າງໃນ". ໃນທໍານອງນີ້ ປະຊາຊົນຜູ້ທີ່ຈະໄດ້ຮັບຜົນກະທົບຈາກໂຄງການ ສາມາດມີອິດທິພົນໂດຍກົງຕໍ່ແນວທາງແລະຜົນຮັບຂອງໂຄງການ. ວິທີການມີສ່ວນຮ່ວມຈາກຂັ້ນຮາກຫຍ້າຈະຊ່ວຍຮັບປະກັນໃຫ້ປະຊາຊົນທ້ອງຖິ່ນມີພັນທະຕໍ່ການຈັດຕັ້ງປະຕິບັດໂຄງການໃຫ້ເກີດຜົນສໍາເຫຼັດໄດ້.

ລັກສະນະພິເສດຂອງໂຄງການພຣະຣາຊດໍາຣິອີກອັນຫນຶ່ງແມ່ນການມີຈຸດປະສົງຫຼາຍໄປພ້ອມໆກັນ. ນອກຈາກຈະວາງເປົ້າໝາຍໃສ່ການພັດທະນາເສຖະກິດ ແລະການຍົກລະດັບລາຍຮັບຂອງປະຊາຊົນແລ້ວ, ໂຄງການຍັງມີເປົ້າໝາຍ ສົ່ງເສີມການພັດທະນາສັງຄົມ, ສ້າງໃຫ້ສັງຄົມມີຄວາມປອດພັຍ ແລະມີຄວາມເຂັ້ມແຂງ ແລະປັບປຸງຄຸນະພາບ ຊີ ວິດໂດຍລວມ. ນອກນັ້ນ, ໂຄງການຍັງໄດ້ກໍ່ຮ່າງສ້າງຕົວໃຫ້ເກີດມີຈິດຕະສາດທາງດ້ານສັງຄົມ ແລະການດໍາລົງຊີວິດແລະວັດທະນາທໍາແບບໄທໆອີກດ້ວຍ. ຕົວຢ່າງ: ໂຄງການແຫ່ງພຣະຣາຊດໍາຣິ ຢູ່ທີ່ ວັດມົງຄົນ ໃນແຂວງສຣະບູຣີ ມີເປົ້າໝາຍຈະປະຕິສັງຂອນວິທີທາງການດໍາລົງຊີວິດຂອງໄທແບບດັ້ງເດີມດ້ວຍການລະດົມໃຫ້ມີການປະສານສົມທົບກັນລະຫວ່າງສະມາຊິກຂອງຊຸມຊົນທັງໝົດ. ຢາກບັນລຸໄດ້ຕາມເປົ້າໝາຍດັ່ງກ່າວ ໂຄງການໄດ້ລວມເອົາການ ກໍ່ສ້າງ ສາລາກາງແຈ້ງຂະໜາດນ້ອຍແຫ່ງຫນຶ່ງເຊິ່ງເປັນສະຖານທີ່ໆພຣະສົງ, ຊາວບ້ານ ແລະພະນັກງານຂອງລັດ ນໍາໃຊ້ໃນການພົບປະກັນແບບບໍ່ເປັນທາງການ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ພ້ອມກັນແກ້ໄຂບັນຫາຂອງຊຸມຊົນ.

## *ຈຸດປະສົງແລະເປົ້າໝາຍຂອງ RDSC*

ສູນ RDSC ມີເປົ້າໝາຍໃຫ້ປະຕິບັດໜ້າທີ່ດັ່ງລຸມນີ້:

- ແຕ່ລະສູນຈະຕ້ອງໄດ້ດໍາເນີນການຄົ້ນຄ້ວາ, ທົດລອງ ແລະສຶກສາ ເພືອພັດທະນາຂໍ້ແນະນໍາແລະວິທີການຕ່າງໆທີ່ມີຄວາມເໝາະສົມກັບສະພາບແລະເງື່ອນໄຂຕົວຈິງຂອງແຕ່ລະພື້ນທີ່ ໃນຂົງເຂດພາກພື້ນ.
- ແຕ່ລະສູນຈະຕ້ອງໄດ້ອອກແຮງໂຄສະນາເຜີຍແຜ່ ແລະແລກປ່ຽນບົດຮຽນ ລະ ຫວ່າງນັກວິທະຍາສາດ, ກໍາມະກອນທາງດ້ານການພັດທະນາ ແລະປະຊາຊົນທ້ອງຖິ່ນ ເພື່ອຕົກລົງກັນເປັນເອກະພາບວ່າ ຈະສາມາດນໍາໃຊ້ຄວາມຮູ້ທາງດ້ານວິຊາການອັນໃໝ່ນີ້ (ເຊັ່ນຕົວຢ່າງ: ຜົນສໍາເຫຼັດຈາກການຄົ້ນຄ້ວາ, ທົດລອງ ແລະ ການສຶກສາ) ເຂົ້າໃນວຽກງານການພັດທະນາທ້ອງຖິ່ນຕົວຈິງໃຫ້ເກີດຜົນປະໂຫຍດສູງສຸດ ໄດ້ຄືແນວໃດ. ໃນກໍລະນີນີ້ ສູນຄົ້ນຄວ້າພູພານ ຈະທໍາໜ້າທີ່ເປັນເວທີ ສໍາຫຼັບຜູ້ເຂົ້າຮ່ວມທັງຫຼາຍ ໄດ້ນໍາໃຊ້ເຂົ້າໃນການກໍານົດ ວິທີການນໍາ

ໃຊ້ຄວາມຮູ້ທາງດ້ານວິຊາການເຂົ້າໃນວຽກງານຕົວຈິງ ໃນການແກ້ໄຂບັນຫາທາງດ້ານການພັດທະນາຂອງທ້ອງຖິ່ນ.

- ໃນບ່ອນໃດ ທີ່ມີຄວາມຮູ້ແລະປະສົບການອັນຫຼາກຫຼາຍ ໃນຫຼາຍຂົງເຂດວິຊາທີ່ແຕກຕ່າງກັນ ແຕ່ມີຄວາມຕິດພັນກັນ, ແຕ່ລະສູນຈະຕ້ອງໄດ້ສຸມໃສ່ການຄຸ້ມຄອງແບບປະສົມປະສານ ໂດຍສັງລວມເອົາບັນດາຄວາມຮູ້ດັ່ງກ່າວມາປະສານເຂົ້າກັນ ເພື່ອເຮັດໃຫ້ສາມາດ ເຂົ້າໃຈບັນຫາກ່ຽວກັບການພັດທະນາ ໄດ້ຢ່າງເປັນລະບົບ ແລະສາມາດກໍານົດວິທີການແກ້ໄຂໄດ້ຢ່າງສອດຄ່ອງ ແລະມີປະສິດທິຜົນດີ.
- ແຕ່ລະສູນຕ້ອງໄດ້ເສີມຂະຫຍາຍການປະສານງານ ພາຍໃນຂະແໜງການຂອງລັດ (ເຊັ່ນ: ກັບບັນດາກົມແລະອົງກອນຕ່າງໆຂອງລັດ) ທາງດ້ານການວາງແຜນ ແລະຈັດຕັ້ງປະຕິບັດໂຄງການ ແນໃສ່ການຍົກປະສິດທິພາບ ແລະຮັບປະກັນເຮັດໃຫ້ການດໍາເນີນໂຄງການປະກົດຜົນເປັນຈິງ.
- ແຕ່ລະສູນຕ້ອງໃຫ້ການບໍລິການແບບຄົບວົງຈອນ (one-stop service), ອັນປະກອບເຂົ້າກັນດ້ວຍ ການຄົ້ນຄ້ວາ, ການທົດລອງ ແລະການສຶກສາ ດ້ວຍນັກວິທະຍາສາດ ແລະ ນັກຄຸ້ມຄອງ; ບໍລິການຂໍ້ມູນ ຂ່າວສານ ແລະເຝິກອົບຮົມແກ່ປະຊາຊົນທ້ອງຖິ່ນ; ແລະ ຖ່າຍທອດຄວາມຮູ້ແກ່ຊຸມຊົນຜ່ານໂຄງການສາທິດ. ໃນທໍານອງນີ້, ໂຄງການມີໜ້າທີ່ເປັນ " ຫໍພິພິດທະພັນທີ່ມີຊີວິດ".

ແຕ່ລະສູນ RDSC ມີສ່ວນເຂົ້າຮ່ວມຢ່າງຕັ້ງໜ້າໃນການຂານຕອບຕໍ່ບັນຫາການພັດທະນາໃນເຂດແຄ້ວນທີ່ສູນຕັ້ງຢູ່. ແຕ່ລະສູນ ມີໜ້າທີ່ດໍາເນີນການສຶກສາຄົ້ນຄ້ວາ ເພື່ອກໍານົດຍຸດທະສາດການພັດທະນາອັນສອດຄ່ອງແລະເໝາະສົມສໍາຫຼັບທ້ອງຖິ່ນທີ່ຕົນເອງຮັບຜິດຊອບ. ພາຍຫຼັງທີ່ຮູ້ແຈ້ງວ່າ ຍຸດທະສາດທີ່ ກໍານົດຂຶ້ນນັ້ນໄດ້ຮັບຜົນດີ ຫຼັງຈາກສໍາເຫຼັດການສາທິດ, ຈຶ່ງນໍາເອົາຜົນສໍາເຫຼັດດັ່ງກ່າວໄປເຜີຍແຜ່ໃຫ້ປະຊາຊົນນໍາເອົາໄປໃຊ້ໃນທ້ອງຖິ່ນຂອງເຂົ້າເຈົ້າ. ໃນກໍຣະນີນີ້, ປະຊາຊົນທ້ອງຖິ່ນມີໂອກາດເຂົ້າຮ່ວມໃນການເຝິກອົບຮົມ ຫຼືບໍ່ ກໍເຂົ້າຮ່ວມສັງເກດການກິດຈະກໍາຢາພາຍໃນສູນ ແລະສາມາດຮຽນຮູ້ວິທີການທີ່ເໝາະສົມທີ່ສຸດໃນການນໍາເອົາແນວຄວາມຄິດຕ່າງໆ ໄປນໍາໃຊ້. ໃນບາງບ່ອນ, ທາງສູນໄດ້ສົ່ງພະນັກງານລົງໄປໃຫ້ຄໍາປຶກສາແກ່ຊຸມຊົນໂດຍກົງແກ່ບັນດາໝູ່ບ້ານທີ່ຢູ່ອ້ອມຮອບ ແລະ ໝູ່ບ້ານທີ່ຢູ່ຫ່າງໄກສອກຫຼີກ. ຍຸດທະສາດການກະຈາຍການຖ່າຍທອດຄວາມຮູ້ໄປສູ່ເຂດນອກນີ້ ມັກຈະສ້າງເງື່ອນໄຂຄວາມຈໍາເປັນແກ່ການສ້າງຕັ້ງ ສະຖານີຄົ້ນຄ້ວາ ອັນເປັນສາຂາຂອງສູນໃນເຂດນອກ ເພື່ອສຸມໃສ່ຄົ້ນຄວ້າ ລົງເລິກບັນຫາສະເພາະ ໃນພື້ນທີ່ໃດໜຶ່ງອັນຈໍາກັດ. ສະຖານີ ດັ່ງກ່າວນີ້ ມີໜ້າທີ່ຄ້າຍຄືກັບກັບສູນ ຄື ດໍາເນີນການຄົ້ນຄ້ວາ ແລະສຶກສາ ກ່ຽວກັບບັນຫາຂອງທ້ອງຖິ່ນ ແລະຖ່າຍທອດຄວາມຮູ້ ເພື່ອສ້າງຜົນປະໂຫຍດແກ່ປະຊາຊົນທ້ອງຖິ່ນ.

## *ການຈັດຕັ້ງແລະການບໍລິຫານງານຂອງສູນ RDSC*

ແນວຄວາມຄິດ ທີ່ເປັນ ປັຊຍາອັນພື້ນຖານຂອງສູນ RDSC ນີ້ ແມ່ນເພື່ອການເອື້ອອໍານວຍເຮັດໃຫ້ ອົງການຈັດຕັ້ງຕ່າງໆ (ອົງກອນຂອງລັດ, ສະມາຄົມນັກວິທະຍາສາດ ແລະອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ) ສາມາດເຮັດວຽກຮ່ວມກັນໄດ້ ພາຍໃຕ້ການຊຸກຍູ້ຂອງສູນ. ເພື່ອເຮັດໃຫ້ການເຮັດວຽກຮ່ວມກັນ ບັນລຸໄດ້ຕາມຈຸດປະສົງທີ່ຕັ້ງໄວ້, ສູນ RDSC ໄດ້ກໍານົດໂຄງຮ່າງການຈັດຕັ້ງອັນນຶ່ງຂຶ້ນເພື່ອຮັບປະກັນໃຫ້ທຸກພາກສ່ວນທີ່ສົນໃຈ ເຂົ້າຮ່ວມໄດ້ຢ່າງເຕັມສ່ວນ ແລະ ເທົ່າທຽມກັນ, ໂດຍຫຼີກລ້ຽງການໃຫ້ຄວາມສໍາຄັນແກ່ພາກສ່ວນໃດນຶ່ງຫຼາຍກວ່າພາກສ່ວນອື່ນໆ. ເພື່ອເຮັດໃຫ້ເຂົ້າໃຈໄດ້ລະອຽດເຖິງພາກສ່ວນທີ່ມີສ່ວນຮ່ວມຫຼັກ ແລະສາຍການພົວພັນທີ່ໄດ້ສ້າງຂຶ້ນ ແນໃສ່ເຮັດໃຫ້ການຈັດຕັ້ງ ສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ, ໄດ້ສັງລວມລາຍລະອຽດກ່ຽວກັບການຈັດຕັ້ງຂອງສູນ RDSC ທັງໃນລະດັບສູນກາງ ແລະ ລະດັບເຂດແຄ້ນ ໄວ້ດັ່ງນີ້: ຢູ່ໃນໂຄງຮ່າງການຈັດຕັ້ງສູນ ໃນລະດັບສູນກາງ ໄດ້ສ້າງຕັ້ງຄະນະກໍາມະການ ບໍລິຫານງານລວມ ແລະ ອະນຸກໍາມະການດ້ານການວາງແຜນແມ່ບົດ ແລະຕິດຕາມກວດກາ. ແຕ່ໃນຂັ້ນຕົ້ນ, ສູນ RDSC ໄດ້ດໍາເນີນການພາຍໃຕ້ຄວາມຮັບຜິດຊອບຂອງຄະນະກະມະການບໍລິຫານງານ ແລະອະນຸກໍາມະການທີ່ແຍກຕົວກັນຢູ່ ເຊິ່ງແຕ່ລະຄະນະຍັງຂຶ້ນກັບໂຄງຮ່າງການປົກຄອງທີ່ແຕກຕ່າງກັນ ອັນພາໃຫ້ເກີດມີຄວາມ

ບໍ່ກົມກຽວ ແລະຄວາມບໍ່ເປັນເອກະພາບ ໃນການດຳເນີນງານຂອງສູນ. ຫຼັງຈາກນັ້ນ, ຈິ່ງໄດ້ມີການດັດສົມລະບົບການບໍລິຫານງານຂອງສູນຄືນໃໝ່ດ້ວຍການປະຕິຮູບບັນດາຄະນະກຳມະການບໍລິຫານງານອັນເກົ່າ ແລະປ່ຽນແທນດ້ວຍຄະນະກະມະການບໍລິຫານງານຊຸດໃໝ່ທີ່ມີຄວາມກະທັດຣັດເບົາບາງກວ່າເດີມ ດັ່ງທີ່ໄດ້ສະເໜີໄວ້ຂ້າງເທິງ.

**ທໍພິພິດທະພັນແຫ່ງຊີວິດ**

*"...ສະໜອງການສາທິດກ່ຽວກັບວຽກງານການພັດທະນາແບບປະສົມປະສານ , ກວມເອົາທຸກສິ່ງທຸກຢ່າງ ແລະ ທຸກດ້ານ ສຳຫຼັບການຊ່ວຍເຫຼືອປະຊາຊົນ ໃຫ້ມີຊີວິດຢູ່ໄດ້ໃນເງື່ອນໄຂສະພາບແວດລ້ອມຂອງເຂົາເຈົ້າ. ທໍພິພິດທະພັນນີ້ ຈະສາມາດບໍລິການທາງດ້ານຮູບແບບຂອງຄວາມຮູ້ແລະເທັກໂນໂລຊີອັນທັນສະໝັຍ ແລະ ເປັນແນວທາງການສ້າງຊີວິດທີ່ມີປະສິດທິພາບສູງ "*

*"ອີກດ້ານນຶ່ງ, ສູນຄົ້ນຄ້ວາທາງດັນການພັດທະນາ ພຣະຣາຊດຳຣິນີ້ ເປັນເວທີອັນນຶ່ງ ສຳຫຼັບການສຶກສາແລະຄົ້ນຄ້ວາໃນຂົງເຂດວິຊາທີ່ແຕກຕ່າງກັນ, ເພາະວ່າເງື່ອນໄຂ ຂອງແຕ່ລະພື້ນທີ່ ມີຄວາມແຕກຕ່າງກັນ ທາງດ້ານ ປະລິມານນ້ຳຝົນ, ດິນຟ້າອາກາດ ແລະ ປະຊາຊົນເອງ ຂ້ອນຂ້າງສູງ"*

*"ກົມກອງ ແລະພະແນກການຕ່າງໆ ທີ່ມີຄວາມກ່ຽວຂ້ອງກັບການດຳລົງຊີວິດຂອງປະຊາຊົນ ໃນດ້ານຕ່າງໆສາມາດແລກປ່ຽນແນວຄວາມຄິດຄວາມເຫັນ, ເຮັດວຽກຮ່ວມກັນ ແລະ ປະສານສົມທົບກັນ ເຮັດໃຫ້ວຽກງານສຳເຫຼັດຜົນ. ປົກກະຕິແລ້ວ, ຄວນຈະມີສູນໜຶ່ງ ເປັນບ່ອນສັງລວມພະນັກງານວິຊາການແລະຜູ້ຊ່ຽວຊານ ຈາກທຸກກົມກອງແລະພະແນກການ ໃນຂົງເຂດວິຊາຕ່າງໆ ເຊັ່ນ: ດ້ານການສົ່ງເສີມກະສິກຳ, ການສົ່ງເສີມສັງຄົມ ແລະການສົ່ງເສີມການສຶກສາທີ່ກ່ຽວຂ້ອງ. ອັນນີ້ ໝາຍຄວາມວ່າ ເຮັດໃຫ້ປະຊາຊົນ ມາດຮັບເອົາຄວາມຮູ້ ໃນຂົງເຂດວິຊາຕ່າງໆໃນເວລາດຽວກັນ. ອັນນີ້ ປຽບເໝືອນສອງຂົ້ວ. ຂົ້ວທີໜຶ່ງ ແມ່ນນັກວິຊາການທີ່ເຮັດວຽກຮ່ວມກັນໃນສະຖານທີ່ດຽວກັນ ແລະ ອີກຂົ້ວໜຶ່ງແມ່ນ ສັງຄົມທົວໄປ ເຊິ່ງເປັນຜູ້ທີ່ຈະໄດ້ຮັບຜົນປະໂຫຍດ..."*.

***ແປຈາກ: ບົດປາສັຍຂອງກະສັດແຫ່ງປະເທດໄທ***

ຢູ່ພາຍໃນຄະນະກຳມະການບໍລິຫານງານສູນ RDSC ປະກອບດ້ວຍ ຫົວໜ້າອຳນວຍການ ຈຳນວນ 12 ທ່ານ ຈາກອົງກອນຂອງລັດທີ່ກ່ຽວຂ້ອງ. ທັງໃນລະດັບສູນກາງ ແລະເຂດແຄ້ວນ. ນອກຈາກນັ້ນ, ຍັງປະກອບດ້ວຍເຈົ້າແຂວງ ຈຳນວນ 6 ທ່ານ ຢູ່ພາຍໃນເຂດ ທີ່ສູນຕັ້ງຢູ່. ຄະນະກະມະການດັ່ງກ່າວດຳເນີນງານ ພາຍໃຕ້ການເປັນປະທານຂອງຫົວໜ້າສະພາອົງຄະມົນຕີໂດຍມີເລຂາທິການໃຫຍ່ຂອງສຳນັກງານໂຄງການພັດທະນາສ່ວນພຣະອົງເປັນຮອງປະທານ.

ຄະນະກຳມະການດັ່ງກ່າວ ເປັນຜູ້ຮັບຜິດຊອບຕໍ່ການຮ່າງນະໂຍບາຍ ແລະຂໍ້ແນະນຳກ່ຽວກັບການດຳເນີນການ ເພື່ອເອື້ອອຳນວຍ, ຄຸ້ມຄອງ, ແລະຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ ແລະ ແກ້ໃຂບັນຫາແລະຂໍ້ຫຼຸ້ງຍາກຕ່າງໆປະຈຳວັນ ທີ່ອາດເປັນອຸປະສັກແກ່ການດຳເນີນການຂອງສູນ. ໃນກໍຣະນີຈຳເປັນ, ຄະນະກຳມະການດັ່ງກ່າວ ຈະໄດ້ຮັບການຊຸກຍູ້ຊ່ວຍເຫຼືອຈາກ ອະນຸກຳມະການ ແລະທີມງານພິເສດທີ່ຕັ້ງໄວ້.

ສ່ວນ ອະນຸກຳມະການດ້ານການວາງແຜນແມ່ບົດແລະການກວດກາຕິດຕາມ ປະກອບດ້ວຍ ຮອງຫົວໜ້າອຳນວຍການ ຈາກ 9 ອົງກອນທີ່ກ່ຽວຂ້ອງ ພາຍໃຕ້ການນຳພາຂອງ ທ່ານ ປະທານກອງເລຂາ ຂອງ RDOB. ອະນຸກຳມະການນີ້ ຖືກມອບໝາຍໃຫ້ ດຳເນີນການສຶກສາ ແລະເກັບກຳຂໍ້ມູນ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດແຜນການແມ່ບົດ. ນອກຈາກນັ້ນ, ອະນຸກຳມະການດັ່ງກ່າວ ຍັງມີໜ້າທີ່ຕິດຕາມກວດກາ ການດຳເນີນງານຂອງສູນ ເພື່ອຮັບປະກັນເຮັດໃຫ້ບັນດາກິດຈະກຳ ໄດ້ຖືກຈັດຕັ້ງປະຕິບັດໃຫ້ທ່ວງທັນກັບເວລາ ແລະໃນຂອບເຂດຂອງງົບປະມານທີ່ກຳນົດອອກໃຫ້.

ການຈັດຕັ້ງໃນລະດັບພາກພື້ນຂອງສູນ RDSC ລວມເອົາ ອະນຸກຳມະການ 1 ຄະນະ ແລະ ທີມງານ 1 ທີມງານ ອັນປະກອບດ້ວຍ ຜູ້ຕາງໜ້າຈາກອົງກອນຂອງລັດ ທີ່ທຳໜ້າທີ່ໃນລະດັບສູນກາງແລະລະດັບເຂດແຄ້ວນ, ເຊິ່ງລວມມີ:

- ກົມພັດທະນາທີ່ດິນ
- ກົມກະສິກຳ
- ກົມປ່າໄມ້

- ກົມພັດທະນາການລ້ຽງສັດ
- ກົມປະມົງ
- ກົມຊົນລະປະທານ
- ກົມຕໍາຫຼວດແຫ່ງປະເທດໄທ
- ກົມສົ່ງເສີມກະສິກໍາ
- ຫ້ອງການເລັ່ງລັດການພັດທະນາຊົນນະບົດ
- ກົມສົ່ງເສີມການຮ່ວມມື
- ກົມປະຊາສົງເຄາະ
- ກົມພັດທະນາຊຸມຊົນ
- ກົມບໍລິຫານງານທ້ອງຖິ່ນ

ຄະນະອະນຸກໍາມະການ ແລະທີມງານ ມີໜ້າທີ່ຮັບຜິດຊອບໃນການກວດກາຕິດຕາມ, ນໍາພາແລະປະສານວຽກງານຂອງສູນໃນລະດັບເຂດແຄ້ວນ. ຕໍາແໜ່ງຫົວໜ້າອໍານວຍການຂອງສູນຕົກເປັນສ່ວນຂອງຜູ້ຕາງໜ້າຈາກອົງກອນຫຼັກຂອງລັດ ທີ່ເຂົ້າຮ່ວມຢູ່ໃນແຕ່ລະເຂດແຄ້ວນ.

## ສູນສຶກສາດ້ານການພັດທະນາຕາມພຣະຣາຊດໍາຣິພູພານ

### *ປະຫວັດຄວາມເປັນມາ*

ສູນສຶກສາດ້ານການພັດທະນາຕາມພຣະຣາຊດໍາຣິ ພູພານ ໄດ້ຖືກສ້າງຕັ້ງຂຶ້ນ ໃນເດືອນ ພະຈິກ 1982 ເພື່ອດໍາເນີນການສຶກສາແລະສົ່ງເສີມວິທີການພັດທະນາທີ່ເໝາະສົມ ແລະສອດຄ່ອງກັບເງື່ອນໄຂຄວາມຈໍາເປັນທາງດ້ານການພັດທະນາໃນພາກຕາເວັນອອກສ່ຽງເໜືອຂອງໄທ. ສູນດັ່ງກ່າວກວມເອົາພື້ນທີ່ ປະມານ 368 ຮຕ ຕິດຈອດກັບເນື້ອທີ່ປ່າທໍາມະຊາດ ທີ່ມີເນື້ອທີ່ເຖິງ 1,760 ຮຕ. ສູນດັ່ງກ່າວນີ້ ມີໜ້າທີ່ບໍລິການຮອບດ້ານ ອັນເປັນບ່ອນ ປະຊາຊົນສອບຖາມຄວາມຮູ້, ນໍາເອົາວິທີການພັດທະນາທີ່ເໝາະສົມແບບໃໝ່ເຂົ້າມານໍາໃຊ້, ແລະ ເປັນບ່ອນ ປະຊາຊົນໄດ້ຮັບການເຝິກອົບຣົມວິຊາຊີບ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ. ນອກຈາກນັ້ນ, ສູນດັ່ງກ່າວ ຍັງມີເປົ້າໝາຍອະນຸລັກ ແລະປົກປັກຮັກສາປ່າໄມ້ທີ່ມີຢູ່ໄກ້ຄຽງກັບພື້ນທີ່ງເຫັນວ່າເປັນຊັບພະຍາກອນແຫຼ່ງນໍ້າອັນສໍາຄັນ.

### *ວັດຖຸປະສົງຂອງສູນ*

ວັດຖຸປະສົງສະເພາະຂອງ ສູນສຶກສາດ້ານການພັດທະນາຕາມພະຣາຊດໍາຣິ ພູພານ ມີດັ່ງນີ້:

1. ເພື່ອສຶກສາແລະທົດລອງເຕັກນິກການກະສິກໍາທີ່ເໝາະສົມ ເພື່ອເປັນຕົວແບບໃຫ້ແກ່ຊາວກະສິກອນ ເພື່ອນໍາເອົາໄປໃຊ້ໃນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ
2. ເພື່ອຮັກສາ, ອະນຸລັກແລະພັດທະນາປ່າໄມ້ ຜ່ານການນໍາໃຊ້ລະບົບຊົນລະປະທານແບບງ່າຍດາຍ
3. ເພື່ອປູກພຶດເສດຖະກິດ ແລະປຸງແຕ່ງຜົນຜະລິດກະສິກໍາສໍາຫຼັບໂຮງງານການກະສິກໍາ
4. ເພື່ອສົ່ງເສີມການພັດທະນາອາຊີບ ປະກອບສ່ວນໃນການຊຸກຍູ້ໃຫ້ຄອບຄົວຊາວກະສິກອນມີລາຍຮັບອັນໝັ້ນຄົງ.

### *ກິດຈະກໍາຂອງໂຄງການ*

ຕົວຢ່າງຂອງກິດຈະກໍາທີ່ໄດ້ລິເລີ້ມໃນ ສູນສຶກສາດ້ານການພັດທະນາຕາມພຣະຣາຊດໍາຣິ ພູພານ ໃນປະຈຸບັນ ລວມມີ:

**ການຄວບຄຸມການເຊາະເຈື່ອນຂອງດິນ** - ສູນດັ່ງກ່າວດໍາເນີນການຄົ້ນຄ້ວາຫາວິທີປ້ອງກັນແລະຫຼຸດຜ່ອນການເຊາະເຈື່ອນຂອງດິນໃນເນື້ອທີ່ ດ້ວຍການສຶກສາທ່າແຮງຂອງຫຍ້າ ແຝກ; ເຊິ່ງເປັນຫຍ້າພື້ນບ້ານຂອງໄທ ອັນມີຄຸນສົມບັດພິ

ເສດໃນການອະນຸລັກດິນ ແລະຮັກສາຄວາມຊຸ່ມຊື່ນຂອງດິນ. ໃນນີ້, ນັກຄົ້ນຄ້ວາຂອງສູນໄດ້ທຳການປູກຫຍ້າແຝກປະສົມປະສານກັບໝາກໄມ້ໃຫ້ໝາກ ແລະປູກຫຍ້າດັ່ງກ່າວຕາມແຄມນ້ຳ ເພື່ອປ້ອງກັນການເຊາະເຈື່ອນ ແລະການສູນເສັຽດິນຊັ້ນໜ້າຈາກການເຊາະລ້າງຂອງນ້ຳຝົນ.

**ສຶກສາແລະພັດທະນາກະສິກຳ** - ການຄົ້ນຄ້ວາແລະການສຶກສາກ່ຽວກັບການກະສິກຳທີ່ດຳເນີນໃນປະຈຸບັນ ລວມມີ: (1) ພັດທະນາວິທີການປູກເຂົ້າແບບໃໝ່, ການສຶກສາພັນເຂົ້າ ແລະ ດຳເນີນການທົດລອງການປູກເຂົ້າປະສົມປະສານກັບພືດຊະນິດອື່ນ; (2) ຄົ້ນຫາໂອກາດສຳຫຼັບປັບປຸງການປູກພືດຕາມທົ່ງ ດ້ວຍການເພີ່ມປູນຂາວເຂົ້າໃນດິນເພື່ອປັບປຸ່ງສະພາບດິນເປັນກົດ ແລະກຳນົດຊະນິດພືດທີ່ມີຄວາມເໝາະສົມ ( ເຊັ່ນ: ມັນຕົ້ນ ແລະ ສາລີຝັກນ້ອຍ); (3) ດຳເນີນການສຶກສາກ່ຽວກັບພືດໃຫ້ໝາກ ເພື່ອກຳນົດວິທີການຍົກຜະລິດຕະພາບ ແລະ ຊະນິດພັນທີ່ໃຫ້ຜົນສູງ ( ເຊັ່ນ: ໝາກມ່ວງ, ໝາກລິ້ນຈີ່, ແລະໝາດຣຸ່ງ); (4) ດຳເນີນການສຶກສາກ່ຽວກັບການປູກເຫັດ, ຕົ້ນຢາງ ແລະຕົ້ນມອນ; (5) ປັບປຸງວິທີການເກັບຮັກສາອາຫານ ແລະການປຸງແຕ່ງເພື່ອຍົກຄຸນຄ່າທາງດ້ານການຕະຫຼາດຂອງຜົນຜະລິດກະສິກຳ; ແລະ (6) ປັບປຸງລະບົບການປູກພືດທີ່ເໝາະສົມ ສຳຫຼັບ ທັງເນື້ອທີ່ໃຊ້ນ້ຳຝົນ ແລະ ໃຊ້ນ້ຳຊົນລະປະທານ.

**ການປະມົງ**- ປະຈຸບັນໄດ້ດຳເນີນການສາທິດ ເພື່ອສົ່ງເສີມວິທີການພັດທະນາການລ້ຽງສັດນ້ຳທີ່ເໝາະສົມ ເຊິ່ງລວມທັງການລ້ຽງປາໃນສະປາ ແລະໃນນາເຂົ້າ ທີ່ຖືວ່າເປັນສ່ວນຫນຶ່ງຂອງລະບົບການປູກຝັງແບບປະສົມປະສານ.

**ປ່າໄມ້**- ໃນປະຈຸບັນ ໄດ້ດຳເນີນວຽກງານ ການສຶກສາ, ການຄົ້ນຄ້ວາ ແລະການພັດທະນາກ່ຽວກັບປ່າໄມ້ ໃນຫຼາຍດ້ານ, ເຊິ່ງລວມມີ: ສົ່ງເສີມຊາວກະສິກອນປູກໄມ້ໃຫ້ໝາກ, ອະນຸລັກຊັບພະຍາກອນປ່າໄມ້ ຜ່ານກ່ານຄຸ້ມຄອງໄຟປ່າ ແລະ ການປູກປ່າ; ສົ່ງເສີມລະບົບການກະສິກຳ - ປ່າໄມ້ແບບປະສົມປະສານ (ເຊັ່ນ: ໄມ້ປ່ອງ, ຫວາຍ, ກາເຟ); ອະນຸລັກແຫຼ່ງນ້ຳ ດ້ວຍການເກັບກຳຂໍ້ມູນດ້ານລະບົບນິເວດ ຂອງປ່າໄມ້ ແລະສ້າງເຂື່ອນເກັບຮັກສານ້ຳ (Check dams) ແລະ ສົ່ງເສີມຜະລິດພັນປ່າໄມ້ ( ເຊັ່ນ: ປູກເຊື້ອຂີ້ຄັ່ງ ເພື່ອຜະລິດໄຂມັນທາເພດານ, ສາທິດວິທີການຜະລິດຖ່ານຈາກໄມ້ແບບເໝາະສົມ).

## *ການສົ່ງເສີມຊຸມຊົນ*

ພາຍຫຼັງສຳເລັດການຄົ້ນຄ້ວາ, ສຶກສາ ແລະການທົດລອງ ໄດ້ນຳເອົາຜົນການຄົ້ນຄ້ວາ ດັ່ງກ່າວໄປເຜີຍແຜ່ຕໍ່ປະຊາຊົນໃນ 15 ໝູ່ບ້ານ ຢູ່ໃນຂອບເຂດຂອງສູນ ດ້ວຍວິທີການລົງເຜີຍແຜ່ໂດຍກົງ, ການຖ່າຍທອດຄວາມຮູ້ທາງດ້ານວິຊາການ, ສ້າງຕົວຢ່າງເພື່ອສາການສາທິດ, ຈັດການເຝິກອົບຮົມຊາວບ້ານດ້ານການນຳໃຊ້ຜົນສຳເຫຼັດຂອງໂຄງການເພື່ອສ້າງຜົນປະໂຫຍດແກ່ເຂົາເຈົ້າ. ນອກຈາກນັ້ນ, ຍັງໄດ້ກະຈາຍຜົນການຄົ້ນຄ້ວາໄປສູ່ທົ່ວທຸກແຫ່ງໃນເຂດຕາເວັນອອກສ່ຽງເໜືອຂອງໄທ ຜ່ານເຄືອຄ່າຍສະຖານີທີ່ເປັນສາຂາຂອງສູນດັ່ງນີ້:

- ໂຄງການພັດທະນາອ່າງນ້ຳເຂດສູງ ຫ້ວຍບາງໃສ, ເມືອງ ດົງຫຼວງ;
- ໂຄງການພັດທະນາອ່າງນ້ຳຄຳ (Kam Basin), ແຂວງສະກົນນະຄອນ ແລະ ນະຄອນພະນົມ; ແລະ
- ໂຄງການພັດທະນາພື້ນທີ່ ບ້ານແດນສາມັກຄີ ກະເສດ ນ້ຳຝົນ (Baan Dan Samakkee Kaset Nam Fon) ເມືອງເຂົາວົງ (Khao Wong), ແຂວງກາລະສິນ.

## ວິທີການລົງຢ້ຽມຢາມພາກສະໜາມ

ຜູ້ເຂົ້າຮ່ວມການເຝິກອົບຮົມຈະມີໂອກາດໄປຢ້ຽມຢາມ ສູນສຶກສາການພັດທະນາຕາມພຣະຣາຊດໍາຣິພູພານ ເພື່ອສົນທະນາກ່ຽວກັບໜ້າທີ່ຂອງສູນດັ່ງກ່າວຮ່ວມກັບ ພະນັກງານຂອງສູນ ແລະ ຍັງຈະໄດ້ລົງເກັບກໍາຂໍ້ມູນຈາກຊາວບ້ານທີ່ດໍາເນີນໂຄງການຢູ່. ສ່ວນກໍານົດເວລາການຢ້ຽມຢາມສະໜາມທີ່ຄາດກະໄວ້ແມ່ນ 2-3 ວັນ. ກ່ອນການລົງຢ້ຽມຢາມສະໜາມ, ຜູ້ເຂົ້າຮ່ວມການເຝິກອົບຮົມຈະຖືກແບ່ງອອກເປັນກຸ່ມຍ່ອຍ ເຊິ່ງແຕ່ລະກຸ່ມຈະໄດ້ຖືກມອບໝາຍໃຫ້ເຮັດວຽກຮ່ວມກັນ ໃນການສຶກສາຮູບແບບ ແລະ ວິທີຂອງສູນສຶກສາການພັດທະນາຕາມພະຣາຊດໍາຣິ ແຫ່ງນີ້. ທຸກໆກຸ່ມຍ່ອຍ ຈະໄດ້ຮັບມອບໝາຍໃຫ້ຄົ້ນຄ້ວາຕາມຄໍາຖາມດັ່ງລຸ່ມນີ້:

- ຈຸດພິເສດອັນໂດດເດັ່ນຂອງໂຄງການແມ່ນຫຍັງ?
- ໂຄງການນີ້ ຈະສາມາດນໍາເອົາໄປຈັດຕັ້ງປະຕິບັດຢູ່ໃນປະເທດອື່ນໃນອ່າງແມ່ນໍ້າຂອງໄດ້ຫຼືບໍ່?
- ກຸ່ມຄົນໃດເປັນກຸ່ມເປົ້າໝາຍຫຼັບສໍາຫຼັບກິດຈະກໍາຂອງໂຄງການ?
- ໂຄງການມີຫຼັກການພື້ນຖານອັນໃດແດ່?
- ໂຄງສ້າງແລະການຈັດຕັ້ງໂຄງການສ່ວນໃດ ທີ່ເຫັນວ່າມີບັນຫາຕໍ່ການບັນລຸຜົນຂອງໂຄງການ?
- ໂຄງການມີການຄັດເລືອກກິດຈະກໍາສະເພາະດ້ານຄືແນວໃດ?
- ມີໃຜແດ່ເຂົ້າຮ່ວມໃນການອອກແບບແນວຄວາມຄິດ ແລະ ການຈັດຕັ້ງປະຕິບັດກິດຈະກໍາໂຄງການ?
- ວິທີການຖ່າຍທອດຄວາມຮູ້ໃຫ້ຊາວບ້ານວິທີໃດທີ່ເຫັນວ່າໄດ້ຜົນດີ?
- ໂຄງການສາມາດບັນລຸຜົນໄດ້ຕາມຈຸດປະສົງທີ່ຕັ້ງໄວ້ຫຼືບໍ່?
- ຕົວແບບຂອງສູນສຶກສາການພັດທະນາຕາມພະຣາຊດໍາຣິ ມີຄວາມສາມາດປັບປຸງໄດ້ຄືແນວໃດ?

ພາຍຫຼັງສໍາເລັດການຢ້ຽມຢາມສະໜາມ, ຜູ້ເຂົ້າຮ່ວມການຝຶກອົບຮົມຈະໄດ້ສົນທະນາກ່ຽວກັບຜົນການສຶກສາຂອງເຂົ້າເຈົ້າ ໂດຍເນັ້ນໜັກໃສ່ ບົດຮຽນທີ່ເຂົາເຈົ້າຖອດຖອນໄດ້ຈາກພາກຕົວຈິງ ທີ່ເຫັນວ່າເປັນສິ່ງເສີມຂະຫຍາຍ ທິດສະດີກ່ຽວກັບການພັດທະນາແບບຍືນນານ ແລະ ການຄຸ້ມຄອງຊັບພະຍາກອນແລະສະພາບແວດລ້ອມແບບປະສົມປະສານ.

## ບົດຮຽນທີ່ສາມາດນໍາໄປໝູນໃຊ້

ບັນດາບົດຮຽນທີ່ ຜູ້ເຂົ້າຮ່ວມບັ້ນເຝິກອົບຮົມ ຄາດວ່າຈະເກັບກໍາໄດ້ ພາຍຫຼັງສິ້ນສຸດກໍຣະນີສຶກສາ ແລະການຢ້ຽມຊົມພື້ນທີ່ໂຄງການ ອາດຈະລວມມີ:

1. ການໃຫ້ການອຸປະຖັມໂຄງການໂດຍກະສັດແກ່ສູນ RDSC ເກີດມາຈາກຄວາມຈໍາເປັນອັນຫຼໍ່ແຫຼມຂອງໂຄງການເອງ. ກະສັດແຫ່ງປະເທດໄທ ໄດ້ອຸທິດການນໍາພາເພື່ອຄົ້ນຫາທາງອອກ ເພື່ອເອົາຊະນະກັບສິ່ງທ້າທາຍທັງປວງທີ່ກໍາລັງປະເຊີນກັບການພັດທະນາແບບຍືນຍົງໃນປະເທດຂອງທ່ານ. ດັ່ງນັ້ນ, ການປະກົດຕົວຂຶ້ນຂອງການປ່ຽນແປງຕ່າງໆ ອັນເນື່ອງມາຈາກໂຄງການ ເປັນນິມິດໝາຍອັນດີ ທີ່ບົ່ງຊີ້ໃຫ້ເຫັນວ່າ ຕົວແບບຂອງການພັດທະນາ ຂອງໄທ ອາດມີຄວາມສາມາດນໍາໄປຈັດຕັ້ງປະຕິບັດໃນປະເທດອື່ນໆ ໃນອ່າງແມ່ນໍ້າຂອງໃຫ້ເກີດຜົນດີໄດ້.
2. ຄວາມສະໜັກໃຈໃນການຮັບເອົາເຕັກໂນໂລຊີທີ່ເຫັນວ່າມີຄວາມເໝາະສົມມານໍາໃຊ້ ເປັນກຸນແຈອັນສໍາຄັນ ທີ່ຈະນໍາໄປສູ່ການເອົາຊະນະຕໍ່ສິ່ງທ້າທາຍທັງປວງທີ່ມີຕໍ່ສິ່ງແວດລ້ອມແລະສັງຄົມ ໃນບັນດາປະເທດກໍາລັງພັດທະນາ. ແຕ່ເຕັກໂນໂລຊີ ທີ່ທັນສະໃໝທີ່ສຸດ ບໍ່ໄດ້ໝາຍວ່າ ຈະສາມາດແກ້ໄຂບັນຫາກ່ຽວກັບການພັດທະນາທ້ອງຖິ່ນໄດ້ດີກວ່າ. ດັ່ງນັ້ນ, ນັກຄົ້ນຄ້ວາ ແລະນັກປົກຄອງທັງຫຼາຍ ຄວນຈະສຸມໃສ່ນໍາເອົາບັນດາເຕັກໂນໂລຊີ

ທີ່ເໝາະສົມກັບສະພາບຕົວຈິງ ແລະສາມາດນຳເອົາມາໃຊ້ໄດ້ຢ່າງງ່າຍດາຍ ແລະຕ້ອງເປັນເຕັກໂນໂລຊີ ທີ່ສາມາດແກ້ໄຂຄວາມຈຳເປັນອັນຮີບດ່ວນຂອງປະຊາຊົນໄດ້.

3. ຜົນສຳເລັດທີ່ແທ້ຈິງຂອງວິທີການຄຸ້ມຄອງແບບປະສົມປະສານ ຈະຂຶ້ນຢູ່ກັບການກຳຈັດສິ່ງກີດຂວາງ ອັນນຳໄປສູ່ການຮ່ວມມື ແລະປະສານງານກັບຢ່າງມີປະສິດທິຜົນລະຫວ່າງຜູ້ມີສ່ວນຮ່ວມທັງຫຼາຍ ແລະ ຂຶ້ນຢູ່ກັບການມີພັນທະຢ່າງມີສະຕິ ຕໍ່ການຈັດຕັ້ງປະຕິບັດໂຄງການຂອງທຸກພາກສ່ວນທີ່ເຂົ້າຮ່ວມ. ຢາກໄດ້ດັ່ງນັ້ນ, ຈະຕ້ອງມີມາດຕະການສຳຫຼັບກຳນົດ ແລະສະຫຼາຍສິ່ງກີດຂວາງທີ່ມີຢູ່ ລະຫວ່າງອົງກອນຂອງລັດທີ່ເຂົ້າຮ່ວມໃນການຄຸ້ມຄອງ ແລະພັດທະນາສະພາບແວດລ້ອມ, ແລະ ຕ້ອງມີມາຕະການດຶງດູດເອົາປະຊາຊົນທ້ອງຖິ່ນເຂົ້າມາຮ່ວມໃນການກຳນົດແນວຄວາມຄິດແລະການພັດທະນາໂຄງການຢ່າງຕັ້ງໜ້າ.

## ເອກະສານອ້າງອີງ

RDPB. 2000. His Majesty King Bhumibol Adulyadej of Thailand – The Developer King. The Office of the Royal Development Project Board, Bangkok.

RDPB. 1999. Museum for Life. The Office of the Royal Development Centre, Bangkok.

RDPB. 1997. Concepts and Theories of His Majesty the King on Development. The Office of Royal Development Projects Board, Bangkok.

RDPB. 1997. Puparn Royal Development Study Centre. Office of the Royal Development Centre, Bangkok.

RDPB. 1996. 50 Years of Development Work According to the Initiatives of His Majesty King Bhumibol Adulyadey of Thailand. The Office of the Royal Development Projects Board, Bangkok.